# ສຶກສາປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເຂົ້າສຶກສາວິຊາຊີບຄູທີ່ວິທະຍາໄລຄູ ພາກໃຕ້ ຂອງ ສປປ ລາວ

*ນວນຈັນ ດວງບຸດດາ[1] ພອນສະຫວັນ ເທບພະສຸລິທອນ[2], ບຸນສິງ ສີແກ້ວມະນີ[3], ທິບພະວັນ ຂັນທະພອນ[4]*

*ພະແນກຄົ້ນຄວ້າວິທະຍາສາດ ແລະ ພັດທະນາວິຊາຊີບຄູ ວິທະຍາໄລຄູສາລະວັນ*

**ບົດຄັດຫຍໍ້**

ສຶກສາປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເຂົ້າສຶກສາວິຊາຊີບຄູ ທີ່ວິທະຍາໄລຄູພາກໃຕ້ຂອງ ສປປ ລາວມີຈຸດປະສົງ ເພື່ອສຶກສາທັດສະນະຄວາມຮັບຮູ້ຂອງນັກສຶກສາ ທີ່ມີຕໍ່ກັບການສຶກສາວິຊາຊີບຄູ ທີ່ ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ, ເພື່ອປຽບທຽບບັນດາປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເຂົ້າສຶກສາວິຊາຊີບຄູ ທີ່ ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ໂດຍການຈຳແນກຕາມເພດ, ສະຖາບັນສຶກສາ ແລະ ຊັ້ນຮຽນ ແລະ ເພື່ອສຶກສາທັດສະນະຄວາມຄິດເຫັນຂອງນັກສຶກສາ ຕໍ່ແນວທາງປັງປຸງຫຼັກສູດວິຊາຄູໃຫ້ໄດ້ຮັບຄວາມໜ້າສົນໃຈຫຼາຍຂຶ້ນໃນອານາຄົດ.ຜົນການສຶກສາພົບວ່າ: 1) ທັດສະນະຄວາມຮັບຮູ້ຂອງນັກສຶກສາ ທີ່ມີຕໍ່ກັບການສຶກສາວິຊາຊີບຄູ ທີ່ ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ລະດັບຄວາມຄິດເຫັນຂອງນັກສຶກສາສ່ວນໃຫຍ່ 'ເຫັນດີປານກາງເຊິ່ງມີຄ່າສະເລ່ຍ. 2) ປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເຂົ້າສຶກສາວິຊາຊີບຄູ ທີ່ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ໂດຍການຈຳແນກຕາມເພດ, ສະຖາບັນສຶກສາ ແລະ ຊັ້ນຮຽນ ດ້ານປັດໄຈພາຍໃນມີຄ່າສະເລ່ຍຢູ່ໃນລະດັບການເຫັນດີຫຼາຍ, ປັດໄຈພາຍນອກມີຄະແນນສະເລ່ຍລະດັບປານກາງ, ດ້ານປັດໄຈທາງເລືອກທີ່ເຂົ້າສຶກສາວິຊາອາຊີບຄູພົບວ່າ: ຄ່າສະເລ່ຍຢູ່ໃນລະດັບຄ່າສູງ. ແລະ 3) ທັດສະນະຄວາມຄິດເຫັນຂອງນັກສຶກສາ ຕໍ່ແນວທາງປັງປຸງຫຼັກສູດວິຊາຄູໃຫ້ໄດ້ຮັບຄວາມໜ້າສົນໃຈຫຼາຍຂຶ້ນໃນອານາຄົດ, ໂດຍລວມຢູ່ໃນລະດັບຄວາມຄິດເຫັນ 'ເຫັນດີຫຼາຍສຸດເຊິ່ງມີຄ່າສະເລ່ຍ $\overline{X}$ = 3.90, (S.D= 0.69)

**ຄຳສຳຄັນ:**

- **ປັດໄຈ:** ແມ່ນໝາຍເຖິງບັນດາຕົວຊີ້ວັດທີ່ເປັນສາເຫດເຮັດໃຫ້ນັກສຶກສາ ຕັດສິນໃຈເລືອກເຂົ້າສຶກສາ ໃນ ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ເຊັ່ນ: ປັດໄຈພາຍໃນ, ປັດໄຈພາຍນອກ ແລະ ປັດໄຈທາງເລືອກ.(Elena P., 2002).
- **ການຕັດສິນໃຈ**: ໝາຍເຖິງ ແນວທາງປະຕິບັດເພື່ອບັນລຸເປົ້າໝາຍທີ່ວາງໄວ້. ຜ່ານການຄົ້ນຄິດ, ພິຈາລະນາ, ປຶກສາຫາລື ຫຼື ໄດ້ຮັບຄຳແນະນຳຈາກຄົນອື່ນ ກໍ່ໃຫ້ເກີດມີການຕັດສິນໃຈຢ່າງມີເຫດຜົນ ເປັນຕົ້ນແມ່ນການຕັດສິນໃຈເລືອກເຂົ້າສຶກສາຢູ່ທີ່ ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ (ສົມຄິ ບາງໂມ, 2012: 166).

---

[1] *ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ, 020 5688 2963, Email: nouanchanhd835@gmail.com*

[2] *ສຳນັກງານອະທິການ ມະຫາວິທະຍາໄລ ຈຳປາສັກ*

[3] *ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

[4] *ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

# The Factors Influencing Students' Decision to Study in The Southern of Lao Teachers Training Colleges


## Abstract

Studying the Factors Influencing Students' Decision to Study in The Southern of Lao Teachers Training Colleges aims to study the students' perception of the teacher education at the Teacher's College and the Pakse Teacher Training College, to compare the factors that influence the decision to enter the teacher's course at Saravan Teacher Training College and Pakse Teacher Training College by gender, educational institution and class and to study the students' opinions on how to improve the teacher's course to be more interesting in the future. The results of the study: 1) Students' perceptions of teacher education at Saravan Teacher Training College and Pakse Teacher Training College. 2) Factors that influence the decision to enter the teaching profession at Saravan Teacher Training College and Pakse Teacher Training College by gender, educational institution and class. The internal factor has an average value at the very agreeable level, the external factor has a moderate average score. and 3) Students' opinions on how to improve the teacher's course to be more interesting in the future, overall at the opinion level of 'most agree' with mean value = 3.90, (S.D = 0.69)

## 1. ພາກສະເໜີ

ການສຶກສາເປັນເຄື່ອງມືທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີສັກກະຍະພາບທຸກດ້ານ, ພັດທະນາຄວາມຮູ້ ແລະ ທັກສະທາງດ້ານວິຊາຊີບຕ່າງໆ. ລັດຖະບານ ສ ປປ ລາວ ເນັ້ນໃຫ້ເຫັນບົດບາດສຳຄັນຂອງວຽກງານສຶກສາ ແລະ ກິລາ ໂດຍຮຽກຮ້ອງໃຫ້ມີການສ້າງຄວາມເຂັ້ມແຂງໃຫ້ແກ່ຊັບພະຍາກອນມະນຸດ;ປັບປຸງທັກສະ ແລະ ຄວາມສາມາດຂອງກຳລັງແຮງງານ ສົ່ງເສີມໃຫ້ເຂົາເຈົ້າມີລະບຽບວິໄນ, ມີຄວາມອົດທົນ, ເພີ່ມຈຳນວນນັກຊ່ຽວຊານ ແລະ ຜູ້ຊຳນານງານ, ປັບປຸງຂີດຄວາມສາມາດທາງດ້ານເຕັກນິກ ແລະ ວິຊາຊີບໃຫ້ແກ່ພະນັກງານຂອງລັດ, ພາກສ່ວນເອກະຊົນ ແລະ ບັນດາຜູ້ປະກອບການ ເພື່ອໃຫ້ສາມາດແຂ່ງຂັນໄດ້ພາຍໃນປະຊາຄົມເສດຖະກິດອາຊຽນ ແລະ ໃນໂລກ.(ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີຄັ້ງທີ IX ., 2021 - 2025).

ຕໍ່ກັບບົດບາດຂອງການສຶກສາ, ບັນດາສະຖາບັນການສຶກສາແມ່ນປັດໄຈຫຼັກໃນການຂັບເຄື່ອນປະຕິບັດນະໂຍບາຍ ແລະ ແຜນຍຸດທະສາດການພັດທະນາການສຶກສາ ໃຫ້ປະກົດຜົນເປັນຈິງ; ໃນນັ້ນ, ຄູທຸກຄົນແມ່ນຈຳເປັນຕ້ອງການພັດນາຄວາມຮູ້, ເຕັກນິກ, ທັກສະໃນການສິດສອນ; ຄູຄວນເປັນຜູ້ອຳນວຍຄວາມສະດວກທີ່ດີ, ເປັນຜູ້ຮຽນຮູ້ທີ່ດີ, ເປັນຜູ້ຕິດຕາມທີ່ດີ, ເປັນຜູ້ຊ່ວຍເຫຼືອທີ່ດີ, ເປັນນັກປະເມີນທີ່ດີ ແລະ ເປັນນັກພັດທະນາທີ່ດີ. (ກະຊວງສຶກສາທິການ ແລະ ກິລາ, 2013).

ການເປັນຄູສະຕະວັດທີ 21 ແມ່ນມີບົດບາດທາງດ້ານເຕັກໂນໂລຍີເພື່ອການສຶກສາ, ບົດບາດໃນການສ້າງແວດລ້ອມການຮຽນເນັ້ນຜູ້ຮຽນເປັນໃຈກາງ, ບົດບາດໃນການປະດິດສ້າງ, ບົດບາດໃນການພັດທະນາແວດລ້ອມແຫ່ງການຮຽນຮູ້ແກ່ນັກຮຽນຢ່າງມີປະສິດທິຜົນ (Hafsah Jan, 2017), ຄູຄວນສ້າງຕົນເອງໃຫ້ກາຍເປັນຄົນທີ່ມີບົດບາດດ້ານການສິດສອນ, ດ້ານການຮຽນຮູ້, ດ້ານການຈັດການວາງທັດສະນະແນວຄວາມຄິດຕົນເອງ, ເປັນແບບຢ່າງທີ່ດີ ແລະ ມີວິທີການບໍລິຫານຈັດການວຽກງານສິດສອນຢ່າງມີຄຸນນະພາບສູງ (Huang, 2019)

ລັດຖະບານ ສປປ ລາວ. ຈຶ່ງໄດ້ໄດ້ອອກນະໂຍບາຍໃຫ້ຄະນະສຶກສາສາດ 4 ມະຫາວິທະຍາໄລ ແລະ ວິທະຍາໄລຄູ 8 ແຫ່ງທົ່ວປະເທດຢຸດການຈັດຕັ້ງການຮຽນ-ການສອນໃນບາງຂະແໜງການສຶກສາຄູ ເນັ້ນການປະຕິບັດຫຼັກສູດການຮຽນ-ການສອນວິຊາອາຊີບຄູໃຫ້ມີຄຸນນະພາບສູງ ໃນແຕ່ລະສາຂາ ວິຊາອາຊີບຄູ.

(Benjamin Ghansah, et al., 2016), ສຶກສາພົບວ່າ ປັດໄຈທີ່ເຮັດໃຫ້ນັກຮຽນຕັດສິນໃຈ ຮຽນສາຂາວິຊາສຶກສາສາດ ແມ່ນຍ້ອນບົດບາດທາງດ້ານວິຊາການຂອງໂຮງຮຽນ ແລະ ຮອງລົງມາແມ່ນປັດໄຈ ຄອບຄົວ, ໝູ່ເພື່ອນ, ດ້ານສະຖານທີ່, ດ້ານການຮອງຮັບອາຊີບ ແລະ ດ້ານການຄວາມສາມາດທາງດ້ານສາຂາທີ່ເລືອກຮຽນ.

(Aminul I., & Nehal H. Sh.,2020), ຍັງໄດ້ສຶກສາພົບອີກວ່າ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈເຂົ້າສຶກສາ ໃນສາຂາ ວິຊາຄູ ແມ່ນດ້ານສະພາບທີ່ຕັ້ງຂອງໂຮງຮຽນ, ດ້ານຄ່າລົງທະບຽນໜ່ອຍກິດ, ດ້ານທຶນການສຶກສາ, ດ້ານຄອບຄົວ, ໝູ່ເພື່ອນ ແລະ ເຂົ້າເຖິງຂໍ້ມູນໂຮງຮຽນ.

ແຕ່ເຖິງຢ່າງໃດກໍ່ຕາມ, ການສຶກສາວິຊາອາຊີບຄູມາຮອດໄລຍະປັດຈຸບັນຖືວ່າ ແມ່ນມີຈຳນວນຫຼຸດລົງເລື້ອຍໆ, ຈຳນວນຕົວເລກລັດຖະກອນຄູກໍ່ຫຼຸດລົງ ແລະ ຈຳນວນນັກສຶກສາຄູທີ່ຈົບໃນສາຂາ ວິຊາຕ່າງໆ ຍັງມີຂີດຈຳກັດດ້ານວຽກຮອງຮັບ ແລະ ຈຳນວນຄູອາສາສະໝັກແມ່ນຍັງມີຈຳນວນຫຼາຍໃນຂອບເຂດທົ່ວປະເທດ ແລະ ບາງເຂດແມ່ນຂາດຄູ (ກົມສ້າງຄູ, 2020)

ນອກນີ້, ຫົວຂໍ້ດັ່ງກ່າວແມ່ນບໍ່ທັນໄດ້ປະກົດເຫັນການຢ່າງກ້ວາງຂວາງ ໂດຍສະເພາະ ການດຳເນີນການສຶກສາທີ່ ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ.

ສະນັ້ນ, ນັກຄົ້ນຄວ້າມີຄວາມສົນໃຈຢາກສຶກສາຫົວຂໍ້ **"ສຶກສາປັດໃຈທີ່ມີອິດທິພົນຕໍ່ການຕັດສິນໃຈໃນການເຂົ້າຮຽນວິຊາຊີບຄູຢູ່ວິທະຍາໄລຄູພາກໃຕ້ຂອງ ສປປ ລາວ."**

**2. ວິທີການຄົ້ນຄວ້າ**

ການສຶກສາຄົ້ນຄວ້າຄັ້ງນີ້ ແມ່ນຜູ້ຄົ້ນຄວ້າໄດ້ດຳເນີນການສຶກສາ ຢູ່ທີ່ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ເຊິ່ງເປັນການຄົ້ນຄວ້າແບບປະລິມານ (Descripive Research).

**2.1 ປະຊາກອນ ແລະ ກຸ່ມຕົວຢ່າງ**

ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ ໄດ້ແກ່ນັກສຶກສາຄູຈາກວິທະຍາໄລຄູທັງ 2 ແຫ່ງຄື: ວິທະຍາໄລຄູສາລະວັນ ແລະ ວິທະຍາໄລຄູປາກເຊ ສົກຮຽນ 2021-2022 ຈຳນວນທັງໝົດ 1.047 ຄົນ, ຍິງ 764 ຄົນ.

ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ ໄດ້ແກ່ນັກສຶກສາຄູຈາກວິທະຍາໄລຄູ ທັງ 2 ແຫ່ງຄື: ວິທະຍາໄລຄູສາລະວັນ ແລະ ວິທະຍາໄລຄູປາກເຊ ສົກຮຽນ 2021 – 2022 ໂດຍໃຊ້ຕາຕະລາງສຳເລັດຮູບຂອງເຄຊີ ແລະ ໂມແກນ (Krejcie and Morgan 1970:608) ໄດ້ຈຳນວນ 436 ຄົນ.

**2.2 ເຄື່ອງມືສຳລັບການວິໄຈ**

ເຄື່ອງມືທີ່ໃຊ້ໃນການສຶກສາສຶກສາຄັ້ງນີ້ຄືແບບສອບຖາມ ກ່ຽວກັບການຕັດສິນໃຈຂອງນັກສຶກສາໃນວິທະຍາໄລຄູສາລະວັນ ແລະ ວິທະຍາໄລຄູປາກເຊ. ເຊິ່ງຜູ້ສຶກສາໄດ້ລວບລວມບັນດາຂໍ້ມູນຈາກແຫຼ່ງຕ່າງໆ ແລະ ໄດ້ຈະພັດທະນາເຄື່ອງມື ມາຈາກ (Thi Thanh 2021, Elena P., 2002, Le, 2020 ແລະ Ming, 2010) ແບ່ງອອກເປັນ 4 ພາກສ່ວນດັ່ງນີ້:

**ພາກສ່ວນທີ1:** ຄຳຖາມທີ່ເປັນຂໍ້ມູນທົ່ວໄປຂອງກຸ່ມຕົວຢ່າງ ເປັນຮູບຄຳຖາມເລືອກຕອບ (Check – List questions) ທັງໝົດ 7 ຄຳຖາມ.

**ພາກສ່ວນທີ 2**: ແມ່ນຄຳຖາມກ່ຽວກັບທັດສະນະຄວາມຮັບຮູ້ຕໍ່ວິຊາອາຊີບຄູເຊິ່ງເປັນຄຳຖາມ 5 ລະດັບຄວາມຄິດເຫັນ ຕາມແບບຂອງທ່ານ (Rensis Likert ) ທັງໝົດ 10 ຄຳຖາມ.

**ພາກສ່ວນທີ 3**: ເປັນຄຳຖາມທີ່ກ່ຽວຂ້ອງກັບປັດໄຈທີ່ສົ່ງຜົນ ເຮັດໃຫ້ນັກສຶກສາສະໝັກເຂົ້າມາຮຽນທີ່ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ເຊັ່ນ: ປັດໄຈພາຍໃນ, ປັດໄຈພາຍນອກ ແລະ ປັດໄຈທາງເລືອກ ຂອງນັກສຶກສາ ເຊິ່ງເປັນຄຳຖາມ 5 ລະດັບຄວາມຄິດເຫັນ ຕາມແບບຂອງທ່ານ (Rensis Likert) ທັງໝົດ 34 ຄຳຖາມ.

**ພາກສ່ວນທີ4:** ເປັນພາກສ່ວນຄຳຖາມກ່ຽວທັດສະນະຄວາມຄິດເຫັນຂອງນັກສຶກສາ ທີ່ເປັນແນວທາງໃນການປັບປຸງ ການຈັດຕັ້ງຫຼັກສູດການສອນວິຊາຊີບຄູ ໃນສອງວິທະຍາໄລ ພາກໃຕ້ຂອງ ສປປ.ລາວ ໃຫ້ມີຄວາມໜ້າສົນໃຈຫຼາຍຂຶ້ນໃນອານາຄົດ ເຊິ່ງໃນສ່ວນແມ່ນເປັນຄຳຖາມ 5 ລະດັບຄວາມຄິດເຫັນເຊັ່ນກັນ ແລະ ມີ ຄຳຖາມເປີດໃສ່ໃນຕອນທ້າຍຂອງພາກສ່ວນນີ້ນຳອີກ

**2.3 ວິທີເກັບກຳຂໍ້ມູນ**

ໃນການເກັບກຳຂໍ້ມູນຜູ້ຄົ້ນຄວ້າໄດ້ດຳເນີນການເກັບກຳຂໍ້ມູນຕາມຂັ້ນຕອນດັ່ງນີ້:

1. ກຽມເອກະສານສອບຖາມ ແລະ ຄວາມພ້ອມຮອບດ້ານກ່ອນການລົງເກັບຂໍ້ມູນ.
2. ຜູ້ຄົ້ນຄວ້າຂໍໜັງສືໜັງສືເກັບກຳຂໍ້ມູນ ຈາກຄະນະສຶກສາສາດ ມະຫາໄລຈຳປາສັກ.
3. ລົງປະສານງານກັບວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ແລະ ນັດມື້ລົງເກັບຂໍ້ມູນ.

4. ລົງເກັບເກັບຂໍ້ມູນ ໃນວັນລາສະການເພື່ອສະດວກເກັບກຳຂໍ້ມູນ ກັບກຸ່ມຕົວຢ່າງນັກສຶກສາ ຕາມຊົ່ວໂມງຮຽນ ໂດຍເຮັດວຽກກັບຜູ້ຊ່ວຍ ພາຍໃນ ວິທະຍາໄລ ທັງສອງແຫ່ງ ເຊິ່ງຈະໃຊ້ເວລາ 2 ອາທິດ ໃນການເກັບກຳຂໍ້ມູນ.
5. ພາຍຫຼັງນັກສຶກສາຕອບສຳເລັດຕາມໄລຍະເວລາທີ່ກຳນົດໄວ້ ແມ່ນມອບໃຫ້ຜູ້ຊ່ວຍ ໃນແຕ່ລະວິທະຍາໄລ ສັງລວມແບບສອບຖາມສະບັບສົມບູນ.
6. ນັກຄົ້ນຄວ້າລົງເກັບແບບສອບຖາມທີ່ຕອບສຳເລັດ ຈາກແຕ່ລະວິທະຍາໄລ ພ້ອມກວດກາຄວາມຖືກຕ້ອງ.
7. ສັງລວມຂໍ້ມູນ, ປ້ອນຂໍ້ມູນ, ດຳເນີນການວິເຄາະ ແລະ ແປຜົນ ຕາມຂັ້ນຕອນ.

**2.4 ການວິເຄະຂໍ້ມູນ ແລະ ສະຖິຕິວິເຄາະຂໍ້ມູນ**

1. ການວິເຄາະຂໍ້ມູນດັ່ງກ່າວ ໃນສ່ວນຂອງ ພາກໜຶ່ງ ຂໍ້ມູນສ່ວນຕົວ ທີ່ເປັນຄຳຖາມເລືອກຕອບແມ່ນຈະໄດ້ໃຊ້ສະຖິຕິຊອກຫາຄ່າຄວາມຖີ່ (Frequency) ແລະ ເປີເຊັນ (Percentages).
2. ໃນສ່ວນທີສອງຄຳຖາມ 5 ລະດັບຄວາມຄິດເຫັນ ແມ່ນວິເຄາະຫາ ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຖານ (SD.) ກ່ຽວກັບທັດສະນະຄວາມຮັບຮູ້ຕໍ່ວິຊາອາຊີບຄູ ໃນພາກສ່ວນທີ2 ແລະ ປັດໄຈ ທີ່ມີອິດທິພົນຕໍ່ການຕັດສິນໃຈຂອງນັກສຶກສາ ສິນໃຈສະໝັກເຂົ້າສຶກສາ ທີ່ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ໃນພາກສ່ວນທີ3 ແລະທັດສະນະຄວາມຄິດເຫັນຂໍ້ສະເໜີແນະໃນພາກສ່ວນທີ4.
3. ຈາກນັ້ນ ຈຶ່ງຈະໄດ້ນຳເອົາຄ່າສະເລ່ຍ ມາວິເຄາະເພື່ອປຽບທຽບບັນດາປັດໄຈຕ່າງໆຂອງວິທະຍາໄລ ທັງສອງແຫ່ງ ໂດຍໃຊ້ສະຖິຕິ (T-test Inderpendent) ແລະ f-test ເພື່ອຕອບສົມມຸດຕິຖານ H1, H2 & H3.

❖ ເກນແປຜົນຂອງທ່ານ **Rensis Likert Scales** ສຳລັບແປຜົນພາກສ່ວນຄຳຖາມ 5 ລະດັບຄວາມຄິດເຫັນໃນພາກສ່ວນທີ2, 3 ແລະ 4 ຂອງແບບສອຍຖາມມີດັ່ງນີ້:

- ຄ່າສະເລ່ຍ 4.51 – 5.00 ໝາຍເຖິງ ເຫັນດີຫຼາຍທີ່ສຸດ.
- ຄ່າສະເລ່ຍ 3.51 – 4.50 ໝາຍເຖິງ ເຫັນດີຫຼາຍ.
- ຄ່າສະເລ່ຍ 2.51 – 3.50 ໝາຍເຖິງ ເຫັນດີປານກາງ .
- ຄ່າສະເລ່ຍ 1.51 – 2.50 ໝາຍເຖິງ ເຫັນດີໜ້ອຍ.
- ຄ່າສະເລ່ຍ 1.00 – 1.50 ໝາຍເຖິງ ເຫັນດີໜອ້ຍທີ່ສຸດ.

❖ ສຳລັບເກນແປຜົນຫາຄ່າຄວາມເຊື່ອໝັ້ນຂອງແບບສອບຖາມ (Nunnally. J.C, 1978) ໄດ້ກ່າວກ່ຽວກັບມາດຖານລະດັບຄ່າຄວາມເຊື່ອໝັ້ນຂອງເຄື່ອງມືການຄົ້ນຄວ້າໄວ້ດັ່ງລຸ່ມນີ້:

- ລະດັບ 0.00-0.49ແມ່ນຕ່ຳສຸດ
- ລະດັບ 0.50-69 ແມ່ນຕ່ຳ
- ລະດັບ 0.7-0.79 ແມ່ນພໍໃຊ້ໄດ້
- ລະດັບ0.8-89 ແມ່ນດີຫຼາຍ
- ລະດັບ0.9-1.00 ແມ່ນດີຫຼາຍສຸດ

**3. ຜົນໄດ້ຮັບ ແລະ ວິພາກບົດ**

1) **ຜົນການວິເຄາະດ້ານ**ທັດສະນະຄວາມຮັບຮູ້ຂອງນັກສຶກສາ ທີ່ມີຕໍ່ກັບການສຶກສາວິຊາຊີບຄູ ທີ່ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ

ຕາຕະລາງທີ 1 ສະແດງໃຫ້ເຫັນເຖິງຜົນການວິເຄາະຂໍ້ມູນ **ດ້ານທັດສະຄວາມຮັບຮູ້ຕໍ່ວິຊາອາຊີບຄູ**; ຈາກຜົນການວິເຄາະໄດ້ພົບວ່າ: ຄ່າສະເລ່ຍລວມຂອງ

ດ້ານດັ່ງກ່າວ ແມ່ນ (X̄) ເທົ່າກັບ 3.31 ແລະ ຄ່າບ່ຽງເບນມາດຕະຖານ (S.D) ເທົ່າກັບ 0.61 ຂອງລະດັບຄວາມຄິດເຫັນ **'ເຫັນດີປານກາງ'**; ຕົວຊີ້ວັດທີ່ມີຄ່າສະເລ່ຍສູງກົ່ວໝູ່ແມ່ນຕົວຊີ້ວັດທີ8 ເຊິ່ງມີຄ່າສະເລ່ຍ (X̄) ເທົ່າກັບ 4.26 ແລະ ຄ່າບ່ຽງເບນມາດຕະຖານ (S.D) ເທົ່າກັບ 0.66 ໃນລະດັບຄວາມຄິດເຫັນ **'ເຫັນດີຫຼາຍ'**; ເຊິ່ງພວກເຂົາໄດ້ກ່າວວ່າ: ພວກເຂົາເຂົ້າໃຈຈຸດປະສົງຂອງຫຼັກສູດສາຂາວິຊາອາຊີບຄູ ທີ່ຕົນສຶກສາຢ່າງຈະແຈ້ງ ແລະ ຕົວຊີ້ວັດທີ່ມີຄ່າສະເລ່ຍຕ່ຳກົ່ວໝູ່ແມ່ນຕົວຊີ້ວັດທີ 10 ມີຄ່າສະເລ່ຍ (X̄) ເທົ່າກັບ 2.52 ແລະ ຄ່າບ່ຽງເບນມາດຕະຖານ (S.D) ເທົ່າກັບ 0.58 ໃນລະດັບຄວາມຄິດເຫັນ **'ປານກາງ'**; ເຊິ່ງນັກສຶກສາໄດ້ກ່າວວ່າ: ນັກສຶກສາມີຄວາມໝັ້ນໃຈວ່າຈະສາມາດນຳເອົາຄວາມຮູ້ ແລະ ຄວາມສາມາດພາຍຫຼັງຈົບການສຶກສາວິຊາອາຊີບຄູນຳໄປປະກອບອາຊີບໃນ ອານາຄົດໄດ້.

**2) ຜົນການວິເຄາະ**ການປຽບທຽບບັນດາປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເຂົ້າສຶກສາວິຊາຊີບຄູ ທີ່ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ໂດຍການຈຳແນກຕາມເພດ, ສະຖາບັນສຶກສາ ແລະ ຊັ້ນຮຽນ.

ຕາຕະລາງທີ 2 ສະແດງຜົນການວິເຄາະດ້ວຍສະຖິຕິ t-test independent ເພື່ອປຽບທຽບຄວາມຄິດເຫັນຂອງນັກສຶກສາ ໂດຍການຈຳແນກຕາມເພດ ຕໍ່ປັດໄຈທີ່ມີອິດທິພົນໃນການຕັດສິນໃຈເຂົ້າຮຽນຫຼັກສູດສາຂາ ວິຊາຊີບຄູ ທີ່ວິທະຍາໄລ ຄູສາລະວັນ ແລະ ວິທຍາໄລ ຄູປາກເຊ ເຫັນວ່າ ເພດຊາຍ ແລະ ເພດຍິງຕໍ່ປັດໄຈພາຍໃນ ແລະ ປັດໄຈພານອກ ແມ່ນມີຄວາມຄິດເຫັນທີ່ແຕກຕ່າງກັນຢ່າງມີໄລຍະສຳຄັນທາງສະຖິຕິໃນລະດັບ 0.01 ແລະ 0.05 ຍົກເວັ້ນປັດໄຈພາຍນອກບາງດ້ານຄື: ປັດໄຈພາຍນອກ ດ້ານເນື້ອໃນຫຼັກສູດ, ບົດບາດ ແລະ ການມີສື່ສຽງທາງວິຊາການ ແລະ ສັງຄົມ ແລະ ການສ້າງໂອກາດ ລວມທັງປັດໄຈທາງເລືອກ ແມ່ນບໍ່ມີຄວາມຄິດເຫັນທີ່ແຕກຕ່າງກັນ ທາງດ້ານເພດ.

ຕາຕະລາງທີ 3 ສະແດງຜົນການວິເຄາະດ້ວຍສະຖິຕິ t-test independent ເພື່ອປຽບທຽບຄວາມຄິດເຫັນຂອງນັກສຶກສາ ໂດຍການຈຳແນກຕາມສະຖາບັນ ຕໍ່ປັດໄຈທີ່ມີອິດທິພົນໃນການຕັດສິນໃຈເຂົ້າຮຽນຫຼັກສູດສາຂາ ວິຊາຊີບຄູ ທີ່ວິທະຍາໄລ ຄູສາລະວັນ ແລະ ວິທຍາໄລ ຄູປາກເຊ ເຫັນວ່າ ຄວາມຄິດເຫັນຂອງນັກສຶກສາລະຫວ່າງ ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ຕໍ່ກັບປັດໄຈ ພາຍໃນ, ປັດໄຈພາຍນອກ ແລະ ປັດໄຈທາງເລືອກ ໂດຍການສົມທຽບສະຖາບັນ ແມ່ນມີຄວາມຄິດເຫັນທີ່ບໍ່ແຕກຕ່າງກັນທາງສະຖິຕິ, ຍົກເວັ້ນ ປັດໄຈພາຍນອກດ້ານ ທີ່ຕັ້ງ, ສິ່ງອຳນວຍຄວາມສະດວກ ແລະ ແວດລ້ອມຂອງວິທະຍາໄລ ແມ່ນມີຄວາມແຕກຕ່າງກັນທາງສະຖິຕິ.

ຕາຕະລາງທີ 4 ສະແດງຜົນການວິເຄາະດ້ວຍສະຖິຕິ F-test independent ເພື່ອປຽບທຽບລະຫວ່າງຄວາມຄິດເຫັນຂອງນັກສຶກສາ ຕໍ່ປັດໄຈທີ່ມີອິດທິພົນໃນການຕັດສິນໃຈເຂົ້າຮຽນຫຼັກສູດສາຂາ ວິຊາຊີບຄູ ທີ່ວິທະຍາໄລ ຄູສາລະວັນ ແລະ ວິທຍາໄລ ຄູປາກເຊ ເຫັນວ່າຄວາມຄິດເຫັນຂອງນັກສຶກສາ ລະຫວ່າງຊັ້ນຮຽນ ຕໍ່ປັດໄຈທາງເລືອກ; ການບໍລິຫານງົບປະມານ ພົບວ່າ: ບໍ່ມີໄລຍະສຳຄັນທາງສະຖິຕິ ໃນລະດັບ 0.05; ໝາຍຄວາມວ່າ ນັກສຶກສາໃນແຕ່ລະຊັ້ນຮຽນ ແມ່ນມີຄວາມຄິດເຫັນໄປໃນທິດທາງດຽວກັນ ຕໍ່ປັດໄຈ ດ້ານການບໍລິຫານງົບປະມານ ຂອງວິທະຍາໄລ ທັງສອງແຫ່ງ.

**3) ຜົນການວິເຄາະຄວາມຄິດເຫັນຂອງນັກສຶກສາຕໍ່ແນວທາງປັບປຸງ ແລະ ພັດທະນາຫຼັກສູດວິຊາ ອາຊີບຄູໃຫ້ມີບົດບາດ ແລະ ມີຄ່ານິຍົມຫຼາຍຂຶ້ນ.**

ຕາຕະລາງທີ5 ສະແດງໃຫ້ເຫັນເຖິງຜົນການວິເຄາະຂໍ້ມູນທີ່ໄດ້ຈາກຄວາມຄິດເຫັນຂອງກຸ່ມຕົວຢ່າງນັກສຶກສາຕໍ່ຜົນການວິເຄາະ ດ້ານທັດສະນະຄວາມຄິດ

ເຫັນຕໍ່ແນວທາງປັບປຸງການຈັດຕັ້ງຫຼັກສູດ**ວິຊາຊີບຄູ**; ຈາກຜົນການວິເຄາະພົບວ່າ: ຄ່າສະເລ່ຍລວມຂອງດ້ານດັ່ງກ່າວ ແມ່ນ ($\bar{X}$) ເທົ່າກັບ 4.67 ແລະ ຄ່າບ່ຽງເບນມາດຕະຖານ (S.D) ເທົ່າກັບ 0.5 ຂອງລະດັບຄວາມຄິດເຫັນ 'ເຫັນດີຫຼາຍສຸດ'; ເປັນຕົ້ນແມ່ນຕົວຊີ້ວັດ3 ແລະ 4 ມີຄ່າສະເລ່ຍສູງເທົ່າກັນ ຄື: ($\bar{X}$) ເທົ່າກັບ 4.79 ແລະ ຄ່າບ່ຽງເບນມາດຕະຖານ (S.D) ເທົ່າກັບ 0.41; 0.40 ໃນລະດັບຄວາມຄິດເຫັນ '**ເຫັນດີຫຼາຍສຸດ**' ສະນັ້ນ, ຈາກຜົນການວິເຄາະດ້ານທັດສະນະຂອງນັກສຶກສາ ຕໍ່ແນວທາງໃນການປັບປຸງ ແລະ ພັດທະນາຫຼັກສູດວິຊາອາຊີບຄູໃຫ້ດີຂຶ້ນໃນອານາຄົດ ສ່ວນໃຫຍ່ແມ່ນມີລະດັບຄວາມຄິດເຫັນ 'ເຫັນດີຫຼາຍ' ຫາ 'ເຫັນດີຫຼາຍສຸດ' ເຊິ່ງນັກສຶກສາມີທັດສະນະວ່າ: ພວກເຂົາຢາກເນັ້ນໃສ່ດ້ານຄ່າຕອບແທນ, ຍົກສູງບົດບາດວິຊາຊີບຄູ, ຄຸ້ມຄອງຫຼັກສູດຄູໃຫ້ມີຄວາມສອດຄ່ອງເພື່ອສ້າງຄວາມເຂັ້ມແຂງແກ່ຄູໃຫ້ມີຄຸນນະພາບສູງ, ລະດົມທຶນ ແລະ ສັນຫາງົບປະມານສິ່ງເສີມໂຄຕ້ານັກສຶກສາຄູໃຫ້ຫຼາຍ ແລະ ພ້ອມພັດທະນາລະບົບການຮຽນ-ການສອນ ແລະ ການປະເມີນຜົນໃຫ້ທັນສະໄໝ ແລະ ມີຄຸນນະພາບ ເພື່ອສ້າງຄູໃຫ້ໄດ້ມາດຖານ ພ້ອມຈັດຫາຕະຫຼາດແຮງງານໃຫ້ຄູຄຸນນະພາບປະກອບອາຊີບທີ່ໝັ້ນຄົງ, ເອົາໃຈໃສ່ສືບພັດທະນາລະບົບສິ່ງອຳນວຍຄວາມສະດວກ ແລະ ການໂຄສະນາປະຊາສຳພັນຫຼັກສູດຄູໃຫ້ເຂົ້າເຖິງກຸ່ມເປົ້າ ແລະ ພ້ອມທັງເປີດໂອກາດໃຫ້ເຂົາເຈົ້າມີສ່ວນຮ່ວມໃນການໂຄສະນາປະຊາສຳພັນກ່ຽວກັບພາລະບົດບາດຂອງການເປັນຄູຢ່າງແທ້ຈິງ.

**3.1 ວິພາກບົດ**

ເພື່ອເປັນການພິສູດສົມມຸດຕິຖານ ຈາກຜົນການວິເຄາະດ້ານການປຽບທຽບປັດໄຈຕ່າງໆທີ່ສົ່ງຜົນຕໍ່ການຕັດສິນໃຈເຂົ້າຮຽນວິຊາອາຊີບຄູ ຄື: ສົມມຸດຕິຖານທີ $H_1$: ປັດໄຈພາຍໃນ (Intrinsic factors) ແມ່ນມີອິດທະພົນຕໍ່ກັບການຕັດສິນໃຈເຂົ້າສຶກສາທີ່ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ໂດຍການຈຳແນກທາງດ້ານເພດ, ສະຖາບັນ ແລະ ປີຮຽນ ແມ່ນບໍ່ແຕກຕ່າງກັນ; ສຳລັບການປຽບທຽບດ້ານເພດ ແມ່ນມີຄວາມຄິດເຫັນທີ່ແຕກຕ່າງກັນ. ແຕ່ປຽບທຽບທາງດ້ານສະຖາບັນສຶກສາ ແລະ ຊັ້ນຮຽນ ແມ່ນເຫັນວ່າ ແມ່ນມີຄວາມຄິດເຫັນທີ່ແຕກຕ່າງກັນ ສະນັ້ນ, ການປຽບທຽບດ້ານສະຖາບັນ ແມ່ນສອດຄ່ອງກັບສົມມຸດຕິຖານທີ່ຕັ້ງໄວ້.

ຕໍ່ສົມມຸດຕິຖານ $H_2$: ປັດໄຈພາຍນອກ (Extrinsic factor) ແມ່ນມີອິດທະພົນຕໍ່ກັບການຕັດສິນໃຈເຂົ້າສຶກສາທີ່ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ໂດຍການຈຳແນກທາງດ້ານເພດ, ສະຖາບັນ ແລະ ປີຮຽນ ແມ່ນບໍ່ແຕກຕ່າງກັນ ແມ່ນບໍ່ມີຄວາມແຕກຕ່າງກັນທາງດ້ານເນື້ອໃນຫຼັກສູດ, ບົດບາດ ແລະ ການມີສື່ສຽງທາງວິຊາການ ແລະ ສັງຄົມ ແລະ ການສ້າງໂອກາດ ແມ່ນສອດຄ່ອງກັບສົມມຸດຕິຖານ. ຍົກເວັ້ນ ປັດໄຈພາຍນອກ ດ້ານທີ່ຕັ້ງ, ສິ່ງອຳນວຍຄວາມສະດວກ ແລະ ແວດລ້ອມ,ດ້ານການໂຄສະນາ ແລະ ການເຂົ້າເຖິງ ແລະ ການບໍລິຫານງົບປະມານ ແມ່ນມີຄວາມແຕກຕ່າງກັນທາງດ້ານເພດທີ່ແຕກຕ່າງກັນ. ສຳລັບການປຽບທຽບດ້ານສະຖາບັນ ແມ່ນມີຄວາມຄິດເຫັນບໍ່ແຕກຕ່າງກັນ ໃນດ້ານການໂຄສະນາ ແລະ ການເຂົ້າເຖິງ, ດ້ານເນື້ອໃນຫຼັກສູດ, ບົດບາດ ແລະ ການມີສື່ສຽງທາງວິຊາການ, ສັງຄົມ ແລະ ການສ້າງໂອກາດ ແລະ ການບໍລິຫານງົບປະມານ. ຍົກເວັ້ນດ້ານດ້ານທີ່ຕັ້ງ, ສິ່ງອຳນວຍຄວາມສະດວກ ແລະ ແວດລ້ອມ ແມ່ນມີຄວາມຄິດເຫັນທີ່ແຕກຕ່າງກັນ. ແຕ່ເມື່ອປຽບໃນດ້ານຊັ້ນຮຽນປັດໄຈດັ່ງດ່າວແມ່ນ ມີຄວາມຄິດເຫັນທີ່ແຕກຕ່າງກັນ ຕໍ່ກັບດ້ານທີ່ຕັ້ງ, ສິ່ງອຳນວຍຄວາມສະດວກ ແລະ ແວດລ້ອມ, ດ້ານການໂຄສະນາ ແລະ ການເຂົ້າເຖິງ, ບົດບາດ ແລະ ການມີສື່ສຽງທາງວິຊາການ ແລະ ສັງຄົມ ແລະ ການສ້າງ

ໂອກາດ. ຍົກເວັ້ນການປຽບທຽບທາງປີຮຽນ ຕໍ່ກັບດ້ານດ້ານເນື້ອໃນຫຼັກສູດ ແລະ ການບໍລິຫານງົບປະມານ.

ສໍາລັບສົມມູດຕິຖານທີ $H_3$: ປັດໄຈທາງເລືອກ (Alternative factors) ແມ່ນມີອິດທະພົນຕໍ່ກັບການຕັດສິນໃຈເຂົ້າສຶກສາທີ່ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ບໍ່ມີຄວາມແຕກຕ່າງກັນ ໂດຍການຈໍາແນກທາງດ້ານເພດ, ສະຖາບັນສຶກສາ ແລະ ຊັ້ນຮຽນ. ເມືອປຽບທຽບ ປັດໄຈທາງເລືອກ ໂດຍການຈໍາແນກລະຫວ່າງ ເພດ ແລະ ລະຫວ່າງສະຖາບັນ ແມ່ນມີຄວາມຄິດເຫັນທີ່ບໍ່ແຕກຕ່າງກັນ. ຍົກເວັ້ນ ການປຽບທຽບປັດໄຈທາງເລືອກດ້ານປີຮຽນ ແມ່ນມີຄວາມຄິດເຫັນທີ່ແຕກຕ່າງກັນ.

**4. ສະຫຼຸບ**

ການສຶກສາຄັ້ງນີ້ ແມ່ນດໍາເນີນພາຍໃຕ້ ຫົວຂໍ້ **"ສຶກສາປັດໃຈທີ່ມີອິດທິພົນຕໍ່ການຕັດສິນໃຈໃນການເຂົ້າຮຽນວິຊາຊີບຄູຢູ່ວິທະຍາໄລຄູພາກໃຕ້ຂອງ ສປປ ລາວ."** ເພື່ອສຶກສາທັດສະນະຄວາມຮັບຮູ້ຂອງນັກສຶກສາ ທີ່ມີຕໍ່ກັບການສຶກສາວິຊາຊີບຄູ ທີ່ ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ,ເພື່ອປຽບທຽບບັນດາປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເຂົ້າສຶກສາວິຊາຊີບຄູ ທີ່ ວິທະຍາໄລ ຄູສາລະວັນ ແລະ ວິທະຍາໄລ ຄູປາກເຊ ໂດຍການຈໍາແນກຕາມເພດ, ສະຖາບັນສຶກສາ ແລະ ຊັ້ນຮຽນ ໂດຍມີຈຸດປະສົງເພື່ອສຶກສາທັດສະນະຄວາມຄິດເຫັນຂອງນັກສຶກສາ ຕໍ່ແນວທາງປັບປຸງຫຼັກສູດວິຊາຄູໃຫ້ໄດ້ຮັບຄວາມໜ້າສົນໃຈຫຼາຍຂຶ້ນໃນອານາຄົດ.ເຊິ່ງຜົນການຄົ້ນຄວ້າໃນແຕ່ລະຈຸດປະສົງ ເຊິ່ງໄດ້ສະຫຼຸບຜົນໂດຍຫຍໍ້ດັ່ງລຸ່ມນີ້:

1. **ດ້ານທັກສະຄວາມຮັບຮູ້ຂອງນັກສຶກສາຕໍ່ວິຊາອາຊີບຄູ**; ຈາກຜົນການວິເຄາະສາມາດສະຫຼຸບໄດ້ວ່າ: ຄ່າສະເລ່ຍລວມຂອງດ້ານດັ່ງກ່າວ ແມ່ນ ($\bar{X}$) ເທົ່າກັບ 3.31 ແລະ ຄ່າບ່ຽງເບນມາດຕະຖານ (S.D) ເທົ່າກັບ 0.61 ຂອງລະດັບຄວາມຄິດເຫັນ **'ເຫັນດີປານກາງ'**; ເຊິ່ງພວກເຂົາໄດ້ກ່າວວ່າ: ນັກສຶກສາເຂົ້າໃຈເຖິງບົດບາດ ແລະ ຄວາມສໍາຄັນຂອງວິຊາອາຊີບຄູຢ່າງເລິກເຊິ່ງ, ເຂົ້າໃຈກ່ຽວກັບຈັນຍາບັນ, ກັບສິດ, ໜ້າທີ່, ແນນະໂຍບາຍຂອງພັກ-ລັດ, ມີຄວາມໝັ້ນໃຈວ່າ ພາຍຫຼັງທີ່ຮຽນຈົບແລ້ວຈະສາມາດນໍາເອົາຄວາມຮູ້ ແລະ ຄວາມສາມາດນໍາເອົາວິຊາອາຊີບຄູໄປປະກອບອາຊີບໃນອານາຄົດໄດ້; ເຊິ່ງໝາຍຄວາມວ່າ ພວກເຂົາຂາດການສຶກສາຮຽນຮູ້ ແລະ ເຂົ້າໃຈເລິກເຊິ່ງກ່ຽວວິຊາອາຊີບຄູ ເປັນຕົ້ນດ້ານບົດບາດຂອງຄູ, ດ້ານຈັນຍາບັນ, ສິດ, ໜ້າທີ່ ແລະ ແນວທາງນະໂຍບາຍຂອງພັດ-ລັດຖະບານຢ່າງເລິກເຊິ່ງ ແລະ ມີຄວາມເຊື່ອວ່າການຮຽນວິຊາຊີບຄູຈະໄດ້ນໍາໃຊ້ ແລະ ປະກອບອາຊີບໃນອານາຄົດທີ່ໝັ້ນຄົງໄດ້. ເພາະວ່າ ສ່ວນໃຫຍ່ພວກເຂົາເຂົ້າໃຈແຕ່ເນື້ອໃນຫຼັກສູດທີ່ຕົນຮຽນ ແລະ ຮູ້ສຶກມັກໃນສາຂາວິຊາເທົ່ານັ້ນ. ແຕ່ກໍ່ຍັງພົບວ່າ: ມີລະດັບຄ່າສະເລ່ຍ ($\bar{X}$) ຢູ່ໃນລະດັບຄວາມຄິດເຫັນ **'ເຫັນດີຫຼາຍ'**; ເຊິ່ງພວກເຂົາໄດ້ກ່າວວ່າ: ພວກເຂົາເຂົ້າໃຈຈຸດປະສົງຂອງຫຼັກສູດສາຂາວິຊາອາຊີບຄູ ທີ່ຕົນສຶກສາຢ່າງຈະແຈ້ງ, ເຂົ້າໃຈເນື້ອໃນ ຂອງຫຼັກສູດວິຊາອາຊີບຄູ, ເຂົ້າໃຈເລິກເຊິ່ງກ່ຽວກັບຄວາມໝາຍຂອງຄູ ແລະ ພວກເຂົາມີຄວາມສົນໃຈ, ຮັກ ແລະ ມ່ວນຊື່ນໃນການສຶກສາວິຊາອາຊີບຄູ; ໝາຍຄວາມວ່າ ນັກສຶກສາເຂົ້າໃຈດີກ່ຽວດ້ານດັ່ງກ່າວ.

1. ດ້ານປັດໄຈພາຍໃນທີ່ມີອິດທິພົນຕໍ່ການຕັດສິນໃຈສຶກສາວິຊາຊີບຄູ; ຈາກຜົນການວິເຄາະໄດ້ພົບວ່າ: ຄ່າສະເລ່ຍລວມຂອງດ້ານດັ່ງກ່າວ ແມ່ນ ($\bar{X}$) ເທົ່າກັບ 3.69 ແລະ ຄ່າບ່ຽງເບນມາດຕະຖານ (S.D) ເທົ່າກັບ 0.6 ຂອງລະດັບຄວາມຄິດເຫັນ **'ເຫັນດີຫຼາຍ'**; ເປັນຕົ້ນແມ່ນນັກສຶກສາໄດ້ກ່າວວ່າ: ພວກເຂົາມີຄວາມຮັກ ແລະ ມັກ ໃນວິຊາອາຊີບຄູ, ມີຄວາມເຊື່ອໃນຄວາມສາມາດຂອງຕົນເອງ ຈຶ່ງຕັດສິນໃຈເຂົ້າສຶກສາ ວິຊາອາຊີບຄູ ແລະ ມີແຮງບັນດານໃຈ ແລະ ສັດທາ ໃນວິຊາອາຊີບ, ເຫັນຄຸນຄ່າຂອງຄວາມເປັນຄູຢ່າງເລິກເຊິ່ງ, ມີຄວາມເຊື່ອ

ໃນການສືບທອດອາຊີບ ຈາກພໍ່ແມ່ ຫຼື ຍາດພີ່ນ້ອງເປັນພະນັກງານຄູ ແລະ ເຊື່ອວ່າອາຊີບຄູສາມາດສ້າງໂອກາດທາງການສຶກສາໄດ້ ແລະ ພວກເຂົາມີຄວາມເຊື່ອວ່າອາຊີບຄູທີ່ຕົນສຶກສາ ແມ່ນຮຽນງ່າຍ ແລະ ເໝາະສົມກັບຕົນ. ແຕ່ເຖິງຢ່າງໃດກໍ່ຕາມ: ພວກເຂົາຍັງບໍ່ແນ່ໃຈວ່າອາຊີບຄູສາມາດສ້າງຄວາມໝັ້ນຄົງທາງດ້ານການເງິນໄດ້.

2. ເພື່ອເປັນການຕອບຈຸດປະສົງທີ3; ເພື່ອສຶກສາ **ດ້ານທັດສະນະຄວາມຄິດເຫັນຕໍ່ແນວທາງປັບປຸງການຈັດຕັ້ງຫຼັກສູດວິຊາຊີບຄູ**; ຈາກຜົນການວິເຄາະພົບວ່າ: ຄ່າສະເລ່ຍລວມຂອງດ້ານດັ່ງກ່າວ ແມ່ນ ($\bar{X}$) ເທົ່າກັບ 4.67 ແລະ ຄ່າບ່ຽງເບນມາດຕະຖານ (S.D) ເທົ່າກັບ 0.5 ຂອງລະດັບຄວາມຄິດເຫັນ **'ເຫັນດີຫຼາຍສຸດ'**; ເປັນຕົ້ນແມ່ນ ນັກສຶກສາໄດ້ມີທັດສະນະວ່າ: ຄວນເພີ່ມຄ່າຕອບແທນໃຫ້ຄູດ້ວຍວິທີທີ່ເໝາະສົມ, ວາງນະໂຍບາຍແກ່ພະນັກງານຄູຢ່າງເໝາະສົມ, ຍົກສູງບົດບາດຄຸນນະພາບຂອງຄູ ໂດຍການຄັດເລືອກ ແລະ ປະເມີນຜົນຄຸນນະພາບຄູຢ່າງສ້າງສັນ ເພື່ອໃຫ້ເກີດຂໍ້ແຂ່ງຂັນໃນການປະຕິບັດວຽກງານຂອງຄູສອນຢ່າງຫ້າວຫັນ, ຄວນປັບປຸງຂີດຄວາມສາມາດໃນການຄຸ້ມຄອງບໍລິຫານຫຼັກສູດການຮຽນ-ການສອນສາຂາ ຄູ ຂອງຜູ້ອຳນວຍການໃຫ້ດີຂຶ້ນກວ່າເກົ່າ, ສ້າງໂອກາດດ້ານອາຊີບໃຫ້ແກ່ນັກສຶກສາຄູໃຫ້ມີຈຳນວນເພີ່ມຂຶ້ນ ແລະ ລະດົມທຶນຊ່ວຍເຫຼືອ ພ້ອມວາງແຜນການໃຊ້ຈ່າຍງົບປະມານໃຫ້ມີຄຸນນະພາບສູງ ເຊັ່ນ: ການວາງນະໂຍບາຍງົບປະມານໃຫ້ແກ່ພະນັກງານຄູ ແລະ ຈັດຫາແຫຼ່ງທຶນການສຶກສາໃຫ້ແກ່ ສາຂາ ວິຊາອາຊີບຄູໃນອານາຄົດ. ນອກນີ້, ຜົນການວິເຄາະຍັງພົບວ່າ: ນັກສຶກສາຕ້ອງການໃຫ້ເພີ່ມການໂຄສະນາ ເພື່ອຍົກສູງບົດບາດວິຊາອາຊີບຄູແກ່ສັງຄົມຢ່າງທົ່ວເຖິງ ເຊັ່ນ: ການລົງສຳມະນາ, ການໂຄສະນາຜ່ານສື່ອອນໄລ, ການເຮັດປ້າຍໂຄສະນາທີ່ໜ້າສົນໃຈ ແລະ ອື່ນໆ ແລະ ປັບປຸງຂີດຄວາມສາມາດໃນການຈັດຕັ້ງການຮຽນ-ການສອນຂອງຫຼັກສູດວິຊາຄູໃຫ້ຮັບປະກັນຄຸນນະພາບສູງ ເຊັ່ນ: ຄູສອນ, ຄວາມສອດຄ່ອງຫຼັກສູດ, ຕອບສະໜອງອຸປະກອນທີ່ມີຄຸນນະພາບຢ່າງພຽງພໍ, ອອກແບບກິດຈະກຳທີ່ຫຼາກຫຼາຍ ແລະ ມີລັກສະນະວິຊາການສູງ.

## 5. ຄວາມຮູ້ບຸນຄຸນ

ການສຶກສາໃນຫົວຂໍ້ "ສຶກສາປັດໃຈທີ່ມີອິດທິພົນຕໍ່ການຕັດສິນໃຈໃນການເຂົ້າຮຽນວິຊາຊີບຄູຢູ່ວິທະຍາໄລຄູພາກໃຕ້ຂອງ ສປປ ລາວ."ສຳເລັດລົງໄດ້ຍ້ອນໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອຈາກຫຼາຍພາກສ່ວນ.

ຂໍສະແດງຄວາມຮູ້ບຸນຄຸນມາຍັງທ່ານ ປອ ນ ພອນສະຫວັນ ເທບພະສຸລິນທອນ, ທ່ານ ບຸນສົງ ສໍແກ້ວມະນີ ແລະ ທ່ານ ທິບພາະວັນຂັນທະພອນ ທີ່ປຶກສາໃນການຄົ້ນຄວ້າທີ່ໃຫ້ຄຳປຶກສາໃນການຄົ້ນຄວ້າ, ພ້ອມທັງເອົາໃຈໃສ່ໃນການແນະນຳ, ປັບປຸງ ແລະ ກວດແກ້ການຂຽນບົດຈົນສຳເລັດສົມບູນ.

ຂອບໃຈມາຍັງຄະນະພັກຄະນະອຳນວຍການ, ຄູອາຈານ ແລະ ເພື່ອນຮ່ວມງານທີ່ໃຫ້ການສະໜັບສະໜູນ ແລະ ອຳນວຍຄວາມສະດວກໃນການເຮັດການຄົ້ນຄວ້າ.

ສະແດງຄວາມຂອງໃຈມາຍັງພາກວິຊາປະຖົມ, ນັກສຶກສາສາຍປະຖົມທີ່ອຳນວຍຄວາມສະດວກໃນການດຳເນີນການຄົ້ນຄວ້າ ແລະ ການເກັບກຳຂໍ້ມູນ. ພິເສດສະແດງຄວາມຂອບໃຈມາຍັງຄອບຄົວ, ພີ່ນ້ອງເພື່ອນມິດສະຫາຍທີ່ໃຫ້ກຳລັງໃຈ ແລະ ຊ່ວຍເຫຼືອຕະຫຼອດມາ.

## 6. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ (2021).ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີຄັ້ງທີ IX .
(2021 - 2025). ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ(2020). ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງວິທະຍາໄລຄູ ສະບັບເລກທີ 6808/ສສກ ລົງວັນທີ 17 ທັນວາ 2020).

ຈຸໄລລັດ ສີລິມັ່ງມູນ, ໜູຊະນາດພັນທະລັດ ແລະ ນັນທະລາດ ຄາສີລີ (2019). ໄດ້ເຮັດວິໄຈເລື່ອງ:ປັດໄຈທີ່ສົ່ງຜົນກະທົບຕໍ່ການຕັດສິນໃຈເຂົ້າຮຽນໃນມະຫາວິທະຍາໄລຂອນແກ່ນປະເທດໂຄດາຫາດພາກາຕາເວັນອອກສຽງເໜືອ.

ສີຖານ ຈັນທະລັງສີ ພ້ອມດ້ວຍຄະນະ, (2006). ບົດລາຍງານຈົບຊັ້ນປະລິນຍາຕີຂອງຄູຕໍ່ການສິດສອນວິຊາ: ສຶກສາພົນລະເມືອງຊັ້ນ ມໍ.5 ຂອງໂຮງຮຽນມັດທະຍົມສົມບູນສາລາຄໍາ ສົກຮຽນ 2005 – 2006.

ສົມໃຈ ຜຸຍຍະພອນ (2011). ຈິດຕະວິທະຍາການສຶກສາ. ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.ນິລາວັນ ບຸບຜາວັນ. (2010).

ຈິດຕະວິທະຍາການສຶກສາ. ນະຄອນຫຼວງວຽງຈັນ: ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ.

ຕາຕະລາງທີ 1 ຜົນວິເຄາະດ້ານທັດສະຄວາມຮັບຮູ້ຕໍ່ວິຊາອາຊີບຄູ.

| ລ/ດ | ຕົວຊີ້ວັດ | $\bar{X}$ | S.D | ແປຜົນ |
|---|---|---|---|---|
| 1 | ນັກສຶກສາເຂົ້າໃຈເລິກເຊິ່ງກ່ຽວກັບຄວາມໝາຍຂອງຄູ. | 4.00 | 0.55 | ເຫັນດີຫຼາຍ |
| 2 | ນັກສາເຂົ້າເຖິງບົດບາດ ແລະ ຄວາມສໍາຄັນຂອງວິຊາອາຊີບຄູຢ່າງເລິກເຊິ່ງ. | 3.26 | 0.70 | ປານກາງ |
| 3 | ນັກສຶກສາເຂົ້າໃຈກ່ຽວກັບຈັນຍາບັນຂອງວິຊາອາຊີບຄູຢ່າງເລິກເຊິ່ງ. | 3.22 | 0.69 | ປານກາງ |
| 4 | ນັກສຶກສາເຂົ້າໃຈກ່ຽວກັບສິດ ແລະ ໜ້າທີ່ຂອງວິຊາອາຊີບຄູຢ່າງເລິກເຊິ່ງ. | 2.67 | 0.53 | ປານກາງ |
| 5 | ນັກສຶກສາເຂົ້າໃຈກ່ຽວແນວທາງນະໂຍບາຍຂອງພັກ-ລັດຕໍ່ວິຊາອາຊີບຄູຢ່າງເລິກເຊິ່ງ. | 2.65 | 0.52 | ປານກາງ |
| 6 | ນັກສຶກສາເຂົ້າໃຈກ່ຽວໜ້າທີ່ ແລະ ຈັນຍາບັນຂອງຕົນໃນການສຶກສາວິຊາອາຊີບຄູ. | 2.72 | 0.51 | ປານກາງ |
| 7 | ນັກສຶກສາເຂົ້າໃຈເນື້ອໃນ ຂອງຫຼັກສູດວິຊາອາຊີບຄູ ທີ່ຕົນສຶກສາຢ່າງເລິກເຊິ່ງ. | 4.06 | 0.60 | ເຫັນດີຫຼາຍ |
| 8 | ນັກສຶກສາເຂົ້າໃຈຈຸດປະສົງຂອງຫຼັກສູດສາຂາວິຊາອາຊີບຄູ ທີ່ຕົນສຶກສາຢ່າງຈະແຈ້ງ. | 4.26 | 0.66 | ເຫັນດີຫຼາຍ |
| 9 | ນັກສຶກສາມີຄວາມສົນໃຈ, ຮັກ ແລະ ມ່ວນຊື່ນໃນການສຶກສາວິຊາອາຊີບຄູ. | 3.75 | 0.76 | ເຫັນດີຫຼາຍ |
| 10 | ນັກສຶກສາມີຄວາມໝັ້ນໃຈວ່າຈະສາມາດນໍາເອົາຄວາມຮູ້ ແລະ ຄວາມສາມາດພາຍຫຼັງຈົບການສຶກສາວິຊາອາຊີບຄູ ນໍາໄປປະກອບອາຊີບໃນອານາຄົດໄດ້. | 2.52 | 0.58 | ປານກາງ |
| **ລວມ** | | **3.31** | **0.61** | ປານກາງ |

ຕາຕະລາງທີ 2 ຜົນວິເຄາະການ**ປຽບທຽບປັດໄຈຕ່າງໆທາງໂດຍການຈໍາແນກຕາມເພດ.**

| **ຕົວຊີ້ວັດ ດ້ານປັດໄຈ** | **ຕົວປຽບທຽບ** | **ຈໍານວນກຸ່ມຕົວຢ່າງ** | $\bar{X}$ | **S.D** | **T** | **Sig. (2taied)** |
|---|---|---|---|---|---|---|
| **ປັດໄຈພາຍໃນ** | ຊາຍ | 263 | 4.20 | 0.35 | 2.10 | 0.039 |
| | ຍິງ | 173 | 4.28 | 0.37 | | |
| **ປັດໄຈພາຍນອກ:** ດ້ານທີ່ຕັ້ງ, ສິ່ງອໍານວຍຄວາມສະດວກ ແລະ ແວດລ້ອມ | ຊາຍ | 263 | 3.51 | 0.39 | 4.260 | 0.000 |
| | ຍິງ | 173 | 3.33 | 0.50 | | |
| **ປັດໄຈພາຍນອກ:** ດ້ານການໂຄສະນາ ແລະ ການເຂົ້າເຖິງ | ຊາຍ | 263 | 5.38 | 0.90 | 5.926 | 0.000 |
| | ຍິງ | 173 | 5.88 | 0.78 | | |
| **ປັດໄຈພາຍນອກ:** ດ້ານເນື້ອໃນຫຼັກສູດ. | ຊາຍ | 263 | 3.76 | 0.44 | 2.137 | 0.292 |
| | ຍິງ | 173 | 3.85 | 0.39 | | |
| **ປັດໄຈພາຍນອກ:** ບົດບາດ ແລະ | ຊາຍ | 263 | 4.08 | 0.51 | 0.544 | 0.587 |

| | | | | | | |
|---|---|---|---|---|---|---|
| ການມີສື່ສຽງທາງວິຊາການ. | ຍິງ | 173 | 4.11 | 0.41 | | |
| **ປັດໄຈພາຍນອກ:** ສັງຄົມ ແລະ ການສ້າງໂອກາດ. | ຊາຍ | 263 | 3.56 | 0.33 | 0.843 | 0.392 |
| | ຍິງ | 173 | 3.53 | 0.31 | | |
| **ປັດໄຈພາຍນອກ:** ການບໍລິຫານ ງົບປະມານ | ຊາຍ | 263 | 3.99 | 0.36 | 3.398 | 0.000 |
| | ຍິງ | 173 | 4.00 | 0.30 | | |
| **ລວມ ປັດໄຈພາຍນອກ** | ຊາຍ | 263 | 4.08 | 0.27 | 0.843 | 0.000 |
| | ຍິງ | 173 | 4.16 | 0.16 | | |
| **ປັດໄຈທາງເລືອກ** | ຊາຍ | 263 | 3.99 | 0.36 | 0.462 | 0.656 |
| | ຍິງ | 173 | 4.00 | 0.30 | | |

**ຕາຕະລາງທີ 3** ຜົນວິເຄາະການປຽບທຽບປັດໄຈຕ່າງໆທາງໂດຍການຈຳແນກຕາມສະຖາບັນການສຶກສາ.

| **ຕົວຊີ້ວັດ ດ້ານປັດໄຈ** | **ຕົວປຽບທຽບ** | **ຈຳນວນ ກຸ່ມຕົວຢ່າງ** | $\bar{X}$ | **S.D** | **T** | **Sig. (2taied)** |
|---|---|---|---|---|---|---|
| **ປັດໄຈພາຍໃນ** | ວິທະຍາໄລ ຄູສາລະວັນ | 190 | 4.11 | 0.50 | 0.562 | 0.574 |
| | ວິທະຍາໄລ ຄູປາກເຊ | 245 | 4.14 | 0.49 | | |
| **ປັດໄຈພາຍນອກ:** ດ້ານທີ່ຕັ້ງ, ສິ່ງອຳນວຍຄວາມສະດວກ ແລະ ແວດລ້ອມ | ວິທະຍາໄລ ຄູສາລະວັນ | 190 | 4.24 | 0.38 | 3.485 | 0.000 |
| | ວິທະຍາໄລ ຄູປາກເຊ | 246 | 4.22 | 0.35 | | |
| **ປັດໄຈພາຍນອກ:** ດ້ານການໂຄສະນາ ແລະ ການເຂົ້າເຖິງ | ວິທະຍາໄລ ຄູສາລະວັນ | 190 | 3.35 | 0.48 | 1.267 | 0.206 |
| | ວິທະຍາໄລ ຄູປາກເຊ | 246 | 3.51 | 0.41 | | |
| **ປັດໄຈພາຍນອກ:** ດ້ານເນື້ອໃນຫຼັກສູດ. | ວິທະຍາໄລ ຄູປາກເຊ | 190 | 5.52 | 0.61 | 1.707 | 0.089 |
| | ວິທະຍາໄລ ຄູສາລະວັນ | 246 | 5.63 | 0.79 | | |
| **ປັດໄຈພາຍນອກ:** ບົດບາດ ແລະ ການມີສື່ສຽງທາງວິຊາການ. | ວິທະຍາໄລ ຄູປາກເຊ | 190 | 3.83 | 0.41 | 0.445 | 0.657 |
| | ວິທະຍາໄລ ຄູສາລະວັນ | 246 | 3.76 | 0.42 | | |
| **ປັດໄຈພາຍນອກ:** ສັງຄົມ ແລະ ການສ້າງໂອກາດ. | ວິທະຍາໄລ ຄູປາກເຊ | 190 | 4.08 | 0.47 | 1.781 | 0.076 |
| | ວິທະຍາໄລ ຄູສາລະວັນ | 246 | 4.10 | 0.47 | | |
| **ປັດໄຈພາຍນອກ:** ການບໍລິຫານ | ວິທະຍາໄລ ຄູປາກເຊ | 190 | 3.58 | 0.34 | 1.764 | 0.078 |
| | ວິທະຍາໄລ ຄູສາລະວັນ | 246 | 3.52 | 0.31 | | |

| | | | | | | |
|---|---|---|---|---|---|---|
| ງົບປະມານ | | | | | | |
| **ລວມ ປັດໄຈພາຍນອກ** | **ວິທະຍາໄລ ຄູປາກເຊ** | **190** | **4.10** | **0.24** | **1.975** | **0.330** |
| | **ວິທະຍາໄລ ຄູສາລະວັນ** | **246** | **4.12** | **0.23** | | |
| **ປັດໄຈທາງເລືອກ** | ວິທະຍາໄລ ຄູປາກເຊ | 190 | 4.00 | 0.30 | 0.667 | 0.505 |
| | ວິທະຍາໄລ ຄູສາລະວັນ | 246 | 3.98 | 0.36 | | |

**ຕາຕະລາງທີ 4 ຜົນວິເຄາະການປຽບທຽບປັດໄຈຕ່າງໆທາງໂດຍການຈຳແນກຕາມປີຮຽນ.**

| ຕົວຊີ້ວັດ ດ້ານປັດໄຈ | ຕົວປຽບທຽບ | ຈຳນວນ ກຸ່ມຕົວຢ່າງ | **$\bar{X}$** | **S.D** | **F** | **Sig. (2taied)** |
|---|---|---|---|---|---|---|
| **ປັດໄຈພາຍໃນ** | ປີ1 | 18 | 4.02 | 0.34 | 0.350 | 0.789 |
| | ປີ2 | 236 | 4.14 | 0.51 | | |
| | ປີ3 | 98 | 4.13 | 0.51 | | |
| | ປີ4 | 83 | 4.11 | 0.45 | | |
| **ປັດໄຈພາຍນອກ:** ດ້ານທີ່ຕັ້ງ, ສິ່ງອຳນວຍຄວາມສະດວກ ແລະ ແວດລ້ອມ | ປີ1 | 18 | 4.22 | 0.35 | 3.004 | 0.000 |
| | ປີ2 | 237 | 4.18 | 0.35 | | |
| | ປີ3 | 98 | 4.17 | 0.35 | | |
| | ປີ4 | 83 | 4.45 | 0.33 | | |
| **ປັດໄຈພາຍນອກ:** ດ້ານການໂຄສະນາ ແລະ ການເຂົ້າເຖິງ | ປີ1 | 18 | 3.31 | 0.49 | 2.618 | 0.050 |
| | ປີ2 | 237 | 3.49 | 0.43 | | |
| | ປີ3 | 98 | 3.43 | 0.50 | | |
| | ປີ4 | 83 | 3.34 | 0.41 | | |
| **ປັດໄຈພາຍນອກ:** ດ້ານເນື້ອໃນຫຼັກສູດ. | ປີ1 | 18 | 5.31 | 0.39 | 1.088 | 0.354 |
| | ປີ2 | 237 | 4.61 | 0.93 | | |
| | ປີ3 | 98 | 4.65 | 0.97 | | |
| | ປີ4 | 83 | 4.49 | 0.58 | | |
| **ປັດໄຈພາຍນອກ:** ບົດບາດ ແລະ ການມີສື່ສຽງທາງວິຊາການ. | ປີ1 | 18 | 3.78 | 0.46 | 8.255 | 0.000 |
| | ປີ2 | 237 | 3.73 | 0.41 | | |
| | ປີ3 | 98 | 3.80 | 0.43 | | |
| | ປີ4 | 83 | 3.99 | 0.38 | | |
| **ປັດໄຈພາຍນອກ:** ສັງຄົມ ແລະ ການສ້າງໂອກາດ. | ປີ1 | 18 | 4.03 | 0.44 | 6.294 | 0.000 |
| | ປີ2 | 237 | 4.01 | 0.43 | | |
| | ປີ3 | 98 | 4.02 | 0.45 | | |
| | ປີ4 | 83 | 4.42 | 0.48 | | |
| **ປັດໄຈພາຍນອກ:** ການບໍລິຫານງົບປະມານ | ປີ1 | 18 | 3.56 | 0.37 | 1.994 | 0.114 |
| | ປີ2 | 237 | 3.52 | 0.31 | | |
| | ປີ3 | 98 | 3.55 | 0.37 | | |
| | ປີ4 | 83 | 3.62 | 0.29 | | |
| **ລວມ ປັດໄຈພາຍນອກ** | | 436 | **4.11** | **0.24** | 6.875 | 0.000 |
| **ປັດໄຈທາງເລືອກ** | ປີ1 | 18 | 4.15 | 0.22 | 5.508 | 0.001 |
| | ປີ2 | 237 | 3.99 | 0.33 | | |
| | ປີ3 | 98 | 3.90 | 0.36 | | |
| | ປີ4 | 83 | 4.07 | 0.33 | | |

**ຕາຕະລາງ5: ຜົນການວິເຄາະທັດສະນະຄວາມຄິດເຫັນຕໍ່ແນວທາງປັບປຸງການຈັດຕັ້ງຫຼັກສູດວິຊາຊີບຄູ.**

| ລ/ດ | ຕົວຊີ້ວັດ | $\bar{X}$ | S.D | ແປຜົນ |
|---|---|---|---|---|
| 1 | ເພີ່ມການໂຄສະນາ ເພື່ອຍົກສູງບົດບາດວິຊາອາຊີບຄູແກ່ສັງຄົມຢ່າງທົ່ວເຖິງ ເຊັ່ນ: ການລົງສຳມະນາ, ການໂຄສະນາຜ່ານສື່ອອນໄລ, ການເຮັດປ້າຍໂຄສະນາທີ່ໜ້າສົນໃຈ ແລະ ອື່ນໆ. | 4.44 | 0.69 | ເຫັນດີຫຼາຍ |
| 2 | ປັບປຸງຂີດຄວາມສາມາດໃນການຈັດຕັ້ງການຮຽນ-ການສອນຂອງຫຼັກສູດວິຊາຄູ ໃຫ້ຮັບປະກັນຄຸນນະພາບສູງ ເຊັ່ນ: ຄູສອນ, ຄວາມສອດຄ່ອງຫຼັກສູດ, ຕອບສະໜອງອຸປະກອນທີ່ມີຄຸນນະພາບຢ່າງພຽງພໍ, ອອກແບບກິດຈະກຳທີ່ຫຼາກຫຼາຍ ແລະ ມີລັກສະນະວິຊາການສູງ. | 4.33 | 0.78 | ເຫັນດີຫຼາຍ |
| 3 | ຍົກສູງບາດບາດຂອງວິຊາອາຊີບຄູໃຫ້ສູງກວ່າເກົ່າ ໂດຍການເພີ່ມຄ່າຕອບແທນ ແລະ ວາງນະໂຍບາຍແກ່ພະນັກງານຄູຢ່າງເໝາະສົມ. | 4.79 | 0.40 | ເຫັນດີຫຼາຍສຸດ |
| 4 | ຍົກສູງບົດບາດ ແລະ ຄຸນນະພາບຂອງຄູ ໂດຍການຄັດເລືອກ ແລະ ປະເມີນຜົນຄຸນນະພາບຄູຢ່າງສ້າງສັນ ເພື່ອໃຫ້ເກີດຂໍ້ແຂ່ງຂັນໃນການປະຕິບັດວຽກງານຂອງຄູສອນຢ່າງຫ້າວຫັນ. | 4.79 | 0.40 | ເຫັນດີຫຼາຍສຸດ |
| 5 | ປັບປຸງຂີດຄວາມສາມາດໃນການຄຸ້ມຄອງບໍລິຫານຫຼັກສູດການຮຽນ-ການສອນສາຂາ ຄູ ຂອງຜູ້ອຳນວຍການໃຫ້ດີຂຶ້ນກວ່າເກົ່າ. | 4.78 | 0.41 | ເຫັນດີຫຼາຍສຸດ |
| 6 | ສ້າງໂອກາດດ້ານອາຊີບໃຫ້ແກ່ນັກສຶກສາຄູໃຫ້ມີຈຳນວນເພີ່ມຂຶ້ນ. | 4.78 | 0.41 | ເຫັນດີຫຼາຍສຸດ |
| 7 | ສົ່ງເສີມຂີດຄວາມສາມາດການຈັດເກັບງົບປະມານ ແລະ ລະດົມທຶນຊ່ວຍເຫຼືອ ພ້ອມວາງແຜນການໃຊ້ຈ່າຍງົບປະມານໃຫ້ມີຄຸນນະພາບສູງ ເຊັ່ນ: ການວາງນະໂຍບາຍງົບປະມານໃຫ້ ແກ່ພະນັກງານຄູ ແລະ ຈັດຫາແຫຼ່ງທຶນການສຶກສາໃຫ້ແກ່ ສາຂາ ວິຊາອາຊີບຄູໃນອານາຄົດ. | 4.78 | 0.41 | ເຫັນດີຫຼາຍສຸດ |
| **ລວມ** | | **4.67** | **0.5** | ເຫັນດີຫຼາຍສຸດ |